# ປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດທີ່ພັກແຮມໃນ ນະຄອນຫຼວງພະບາງ

**ປຽດ ສີອຸດົມພັນ[1], ຈະຮື່ ຢ່າງແສນໄຊ[2], ມົງຄຸນ ວັດທະນາ[2]**

*ສາຂາວິຊາບໍລິຫານບໍລິຫານທຸລະກິດ, ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸະພານຸວົງ, ສປປ ລາວ*

*[1]ຕິດຕໍ່ພົວພັນ: ປຽດ ສີອຸດົມພັນ, ໂທ: +856 20 28628866, ອີເມວ: pietsyoudomphan@gmail.com*

*[2]ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລ ສຸພານຸວົງ*

**ຂໍ້ມູນບົດຄວາມ:**

*ການສົ່ງບົດ: 07 ເມສາ 2023*

*ການປັບປຸງ: 21 ພຶດສະພາ 2023*

*ການຕອບຮັບ: 02 ມິຖຸນາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າມີຈຸດປະສົງຄົ້ນຄວ້າຄື: ສຶກສາສະພາບການດໍາເນີນທຸລະກິດທີ່ພັກແຮມຂອງຜູ້ປະກອບການ. ສຶກສາຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມຂອງຜູ້ປະກອບການ ແລະ ເພື່ອສຶກສາປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມຂອງຜູ້ປະກອບການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ. ກຸ່ມຕົວຢ່າງໃນການສຶກສາ ຈໍານວນ 264 ຄົນ ຈາກຜູ້ປະກອບການທຸລະກິດທີ່ພັກແຮມ ປະເພດເຮືອນພັກ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ. ໂດຍໃຊ້ແບບສອບຖາມໃນເຄື່ອງມືໃນການລວບລວມຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການວິເຄາະຄືຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການວິເຄາະສົມຜົນການຖົດຖອຍແບບພະຫຸຜົດຄ້ອຍ ດ້ວຍວິທີ Stepwise. ຜົນການຄົ້ນຄວ້າພົບວ່າ: ສະພາບການດໍາເນີນທຸລະກິດທີ່ພັກແຮມ ຂອງຜູ້ປະກອບການທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈໍານວນ 355 ຄົນ ສ່ວນໃຫຍ່ມີຮູບແບບການປະກອບທຸລະກິດ ເປັນວິສາຫະກິດສ່ວນບຸກຄົນ ທີ່ມີຂະໜາດທຸລະກິດຈຸລະວິສະຫະກິດ, ລະດັບການໃຫ້ບໍລິການ 2 ດອກຈໍາປາ. ໂດຍແຫຼ່ງເງິນທຶນໃນການປະກອບກິດຈະການ ແມ່ນມາຈາກທຶນຕົນເອງທັງໝົດ ແລະ ແຫຼ່ງເງິນທຶນໝູນວຽນ ແມ່ນມາຈາກ ທຶນກໍາໄລສະສົມຂອງກິດຈະການ ເຊິ່ງມີເຫດຜົນສໍາຄັນໃນການປະກອບທຸລະກິດມາຈາກແຮງຈູງໃຈສະຖານທີ່ ແລະ ເສັ້ນທາງຄົມມະນາຄົມ, ມີໄລຍະເວລາດໍາເນີນທຸລະກິດທີ່ພັກແຮມ ລະຫວ່າງ 13 ປີ-15 ປີ ແລະ ມີລາຍຮັບສະເລ່ຍຕໍ່ເດືອນ ຕໍ່າກວ່າ 50 ລ້ານກີບ, ຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມໂດຍລວມໃຫ້ຄວາມສໍາຄັນ ຢູ່ໃນລະດັບຫຼາຍ ເຊິ່ງມາຈາກຄວາມສາມາດໃນຕອບສະໜອງຢ່າງວ່ອງໄວ ໃນການໃຫ້ບໍລິການເໜືອກວ່າຄູ່ແຂ່ງຂັນທຸລະກິດ, ຄວາມສາມາດການເປັນຜູ້ນໍາທາງຕົ້ນທຶນໃນການໃຫ້ບໍລິການເໜືອຕໍ່າກວ່າຄູ່ແຂ່ງຂັນ ແລະ ຄວາມສາມາດການສ້າງຄວາມແຕກຕ່າງໃນບໍລິການທີ່ແຕກຕ່າງຈາກຄູ່ແຂ່ງຂັນ. ປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມ ໃນປະເພດທຸລະກິດເຮືອນພັກປະເພດທຸລະກິດເຮືອນພັກ ຢູ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບ ມີ 5 ປັດໄຈຄື :ປັດໄຈດ້ານກາຍຍະພາບ ,ປັດໄຈດ້ານເຕັກໂນໂລຊີ ,ປັດໄຈດ້ານເສດຖະກິດ ,ປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ ແລະ ປັດໄຈດ້ານວັດທະນາທໍາ ແລະ ສັງຄົມ

**ຄໍາສັບສໍາຄັນ:** *ປັດໄຈລັກສະນະຂອງການເປັນຜູ້ປະກອບການ, ປັດໄຈສ່ວນປະສົມການຕະຫຼາດ, ປັດໄຈສະພາບແວດລ້ອມພາຍນອກ, ຄວາມສາມາດໃນການແຂ່ງຂັນ.*

# Factors affective to the competitiveness Hotel Business in Luang Prabang

**Piet SYOUDOMPHANH[1], Chahue YANGSANSAY[2], Mongkhoun VATTHANA[2]**

*Department of General Business Management Faculty of Economics and Tourism Souphanouvong University, Lao PDR*

[1]***Correspondence:*** *Piet SYOUDOMPHANH, Tel: +856 20 286268866, E-mail: Pietsyoudomphan@gmail.com*

[2] *Faculty of Economics and Tourism, Souphanouvong University*

***Article Info:***
*Submitted: Apr 07, 2023*
*Revised: May 21, 2023*
*Accepted: Jun 02, 2023*

**ABSTRACT**

The purpose of this study was to study the business conditions of the entrepreneurs' hotels. to study the hotel operator's competitiveness business and to study the affecting competitiveness factors of hotel operators in Prabang, Luang Prabang province. 355 participants who were the hotel operators in Luang Prabang province involved in this study. Questionnaires was used to measure hotel operators in this research. Data collection was analyzed by Stepwise method to satisfy the frequency, percentage, mean value, standard deviation and multiple regression equation. The finding of this study showed: 1) The mostly of 355 hotel operators were the individual ownership micro enterprise business only which their resort, hotel and quest house are 2-star service level. The business was run by their own funds according to the accumulated profit capital of the business as a large part. An important reason for starting the business is from the motivation of the location and the transportation route with a period of business at the hotel between 13 years and 15 years covering 46.76%, with an average monthly income of less than 50 million kip. The competitiveness of hotel business operators as a whole give's importance to many levels, including the ability to respond quickly in providing services superior to business competitors, the ability to be a cost leader in providing services inferior to competitors, and the ability to create differences in services that are different from competitors. 3) Internal factors affecting the competitiveness of the hotel business in Prabang, Luang Prabang include 6 factors: physical factors, distribution channel factors, competitive strength factors, marketing promotion factors, product factors, and service process factors. In addition, the external environmental factors that affect the competitiveness of hotel business in Luang Prabang province include four factors: technological factors, economic factors, cultural-social factors, and political factors.

**Keywords:** *entrepreneurship characteristics, marketing mix factors, external environmental factors, competitiveness.*

## 1. ພາກສະເໜີ

ປະຈຸບັນອຸດສາຫະກຳການທ່ອງທ່ຽວ ມີບົດບາດ ແລະ ທີ່ສຳຄັນຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ມີຄວາມສຳຄັນຕໍ່ລະບົບເສດຖະກິດຂອງໂລກ ເຊິ່ງສາມາດເຮັດໃຫ້ມີລາຍໄດ້ໃຫ້ກັບປະເທດຊາດເປັນຈຳນວນຫຼວງຫຼາຍ ແລະ ມີແນວໂນ້ມສູງຂຶ້ນ. ອຸດສາຫະກຳການທ່ອງທ່ຽວ ໂດຍສະເພາະທຸລະກິດທີ່ພັກແຮມ ກາຍເປັນການບໍລິການ ແລະ ແຫຼ່ງລາຍໄດ້ເງິນຕາຕ່າງປະເທດທີ່ສຳຄັນ, ການສົ່ງເສີມພັດທະນາທ້ອງຖິ່ນ ແລະ ສ້າງວຽກເຮັດງານທຳ ໃຫ້ປະຊາຊົນຈຳນວນຫຼວງຫຼາຍ. ອຸດສະຫະກຳການທ່ອງທ່ຽວ ໃນໂລກໄດ້ມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ນັບທັງ ສປປ ລາວ ກໍ່ມີການຂະຫຍາຍຕົວເຊັ່ນດຽວກັນ ເນື່ອງຈາກຈຳນວນນັກທ່ອງທ່ຽວກໍໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ, ບັນດາທຸລະກິດດ້ານສະຖານທີ່ພັກແຮມ ເຊິ່ງປະກອບດ້ວຍໂຮງແຮມ, ຣີສອດ ແລະ ເຮືອນພັກ ກໍໄດ້ມີການຂະຫຍາຍຕົວເພື່ອຕອບສະໜອງໃຫ້ແກ່ນັກທ່ອງທ່ຽວ ແລະ ຜູ້ຊົມໃຊ້ສະຖານທີ່ພັກແຮມໄດ້ມີການບໍລິການ ທີ່ດີຕອບສະໜອງຄວາມຕ້ອງການຂອງຜູ້ໃຊ້ບໍລິການ, ໂດຍມີທາງເລືອກ ຫລາຍຂຶ້ນ ແລະ ປະຕິບັດຕາມ ແນວທາງຍຸດທະສາດພັດທະນາການທ່ອງທ່ຽວ ຂອງ ສປປ ລາວ ຮອດ 2020 ເພື່ອກ້າວໄປສູ່ການ ບໍລິການທີ່ດີໄດ້ມາດຕະຖານສາກົນເທື່ອລະກ້າວ. ບັນດາທຸລະກິດການບໍລິການດ້ານສະຖານທີ່ພັກແຮມ ຢູ່ສປປ ລາວ ສ່ວນໃຫຍ່ ແມ່ນເປັນທຸລະກິດລັກສະນະແບບຄອບຄົວ, ການຈັດຕັ້ງບໍ່ທັນເປັນລະບົບ, ບໍ່ມີເປົ້າໝາຍການຕະຫຼາດທີ່ແນ່ນອນ ລວມທັງການສະໝັກເຂົ້າເຄືອນໄຫວ ຢູ່ໃນສະມາຄົມໂຮງແຮມ - ຮ້ານອາຫານລາວ ກໍມີຈຳນວນໜ້ອຍ. ສະນັ້ນ, ເພື່ອເຮັດໃຫ້ທຸລະກິດບໍລິການດ້ານສະຖານທີ່ພັກແຮມເຂົ້າສູ່ລະບົບ ແລະ ເພື່ອເປັນການຍົກລະດັບຂອງຜະລິດຕະພັນ ແລະ ການບໍລິການດ້ານສະຖານທີ່ພັກແຮມ ໃຫ້ໄດ້ຕາມມາດຕະຖານສາກົນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດຳເນີນທຸລະກິດບໍລິ ການສະຖານທີ່ພັກແຮມ ແລະ ຜູ້ທີ່ໃຊ້ບໍລິການ, ຮັບປະກັນຄວາມຍຸດຕິທຳ, ເໝາະສົມ ແລະ ມີລັກສະນະດຶງດູດຈາກການບໍລິການຈຶ່ງມີຄວາມ ຈຳເປັນຕ້ອງໄດ້ສ້າງມາດຕະຖານສະຖານທີ່ພັກແຮມໃນ ສປປ ລາວ ຂຶ້ນເພື່ອເປັນການພັດທະນາຍົກລະດັບການບໍລິການ ແນໃສ່ຊຸກຍູ້ ແລະ ສົ່ງເສີມດ້ານຄຸນນະພາບການບໍລິການທີ່ພັກແຮມໃຫ້ນັບມື້ນັບສູງຂຶ້ນ. ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການລົງທຶນໃນຂະແໜງທຸລະກິດສະຖານທີ່ພັກແຮມໃຫ້ແຂງແຮງຍິ່ງໆຂຶ້ນ (ກະຊວງຖະແຫຼ່ງຂາວ, ວັດທະນາທຳ ແລະ ການທ່ອງທ່ຽວ. 2007).

ການແຂ່ງຂັນທາງທຸລະກິດເປັນການສ້າງຄວາມໄດ້ປຽບທາງດ້ານທຸລະກິດຂອງຜູ້ປະກອບການ ເຊິ່ງເປັນຂະບວນການທີ່ນຳໄປສູ່ການເປັນຜູ້ນຳທາງການຕະຫຼາດ ຫຼື ການໄດ້ກຳໄລທີ່ສູງກວ່າຄູ່ແຂ່ງຂັນລາຍອື່ນໄດ້ປົກກະຕິ, ການສ້າງຄວາມໄດ້ປຽບທາງການການແຂ່ງຂັນມີເປົ້າໝາຍຈະເຮັດໃຫ້ທຸລະກິດສາມາດມີກຳໄລໄດ້ຢ່າງຍືນຍົງ ແລະ ເໜືອກວ່າຄູ່ແຂ່ງຂັນຈຶ່ງເປັນພາລະກິດທີ່ສຳຄັນຕໍ່ການດຳເນີນທຸລະກິດໃນໄລຍະຍາວ, ເມື່ອທຸລະກິດສາມາດສ້າງຄວາມໄດ້ປຽບທາງການການແຂ່ງຂັນເໜືອກວ່າຄູ່ແຂ່ງຂັນກໍ່ຈະມີຄວາມໝາຍວ່າທຸລະກິດສາມາດດຳເນີນກິດຈະການໄດ້ດີກວ່າຄູ່ແຂ່ງຂັນ, ຄວາມໄດ້ປຽບທາງດ້ານການແຂ່ງຂັນຖືວ່າເປັນສິ່ງທີ່ມີຄວາມຈຳເປັນໃນການດຳເນີນທຸລະກິດໃນຍຸກທີ່ມີການແຂ່ງຂັນຢ່າງຮຸນແຮງ, ດັ່ງນັ້ນໃນການກຳນົດນະໂຍບາຍ, ຍຸດທະສາດ ແລະ ນະໂຍບາຍການແຂ່ງຂັນທີ່ຊັດເຈນ ເປັນສິ່ງທີ່ຜູ້ປະກອບການຈະຊ່ວຍສ້າງຂີດຄວາມສາມາດ ແລະ ຄວາມໄດ້ປຽບທາງການແຂ່ງຂັນເໜືອກວ່າຄູ່ແຂ່ງຂັນ, ເນື່ອງຈາກການກຳນົດນະໂຍບາຍ ແລະ ທິດທາງການດຳເນີນທຸລະກິດໃນອະນາຄົດທີ່ຊັດເຈນ ເຊິ່ງເຮັດໃຫ້ທຸລະກິດສາມາດດຳເນີນໄປຕາມເປົ້າໝາຍ ແລະ ສາມາດສະໜອງກັບຄວາມຕ້ອງການຂອງຕະຫຼາດທີ່ມີການປ່ຽນແປງຢ່າງຕໍ່ເນື່ອງ.

ຈາກທີ່ມາ ແລະ ຄວາມສຳຄັນຂອງບັນຫາພົບວ່າຜູ້ປະກອບການທຸລະກິດທີ່ພັກແຮມຢູ່ໃນນະຄອນຫຼວງພະບາງມີການພັດທະນາຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງເພື່ອໃຫ້ເໝາະສົມກັບການປ່ຽນແປງສະພາບເສດຖະກິດໃນປະຈຸບັນເຮັດໃຫ້ການດຳເນີນທຸລະກິດຕ້ອງປະເຊີນໜ້າກັບການແຂ່ງຂັນສູງຂຶ້ນ, ສະນັ້ນ, ຂອງການສຶກສາວິໄຈທີ່ຜູ້ສຶກສາໃຫ້ຄວາມສຳຄັນ ແລະ ສົນໃຈທີ່ຈະສຶກສາປັດໄຈທີ່ຜົນຕໍ່ການແຂ່ງຂັນທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງເພື່ອເປັນແນວທາງໃຫ້ການປະກອບທຸລະກິດປະສົບຜົນສຳເລັດ, ສາມາດພັດທະນາທຸລະກິດມີການຂະຫຍາຍຕົວ, ການບໍລິຫານການຕະຫຼາດ, ການພັດທະນາການບໍລິການທີ່ມີແນວຄິດສ້າງສັນ, ການພັດທະນາບຸກຄະລາກອນ ແລະ ສະພາບຄ່ອງໃນການບໍລິຫານທຸລະກິດເປັນທຸລະກິດທີ່ເຂັ້ມແຂງ, ຍົກລະດັບກິດຈະການຂອງຕົນເອງ ແລະ ເພີ່ມທາແຮງທຸລະກິດປະສົບຜົນສຳເລັດ.

ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈ ກຸ່ມຜູ້ວິໄຈໄດ້ມີຈຸດປະສົງຂອງການຄົ້ນຄວ້າວິໄຈຄືດັ່ງນີ້:

1) ເພື່ອສຶກສາຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມຂອງຜູ້ປະກອບການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

2) ເພື່ອສຶກສາປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມຂອງຜູ້ປະກອບການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ເຄື່ອງມືທີ່ໃຊ້ໃນການທີ່ໃຊ້ໃນການວິໄຈຄື: ການສຶກສາປັດໃຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດທີ່ພັກແຮມໃນ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍມີວິທີການສຶກສາແຕ່ລະສ່ວນ ດັ່ງນີ້: ການສຶກສາສະພາບການດໍາເນີນທຸລະກິດທີ່ພັກແຮມໃນ ນະຄອນຫຼວງພະບາງ ແຂວງຫຼວງພະບາງແຂວງຫຼວງພະບາງ ເປັນການສຶກສາແບບປະລິມານ ໂດຍນໍາໃຊ້ແບບສອບຖາມ ແລະ ອະທິບາຍການປ່ຽນແປງຂໍ້ມູນໃນທາງພັນລະນາ, ການສຶກສາຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນການສຶກສາແບບປະລິມານ ໂດຍນໍາໃຊ້ແບບສອບຖາມ ແລະ ອະທິບາຍການປ່ຽນແປງຂໍ້ມູນໃນທາງພັນລະນາ, ສໍາລັບການສຶກສາປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ເປັນການສຶກສາແບບປະລິມານ ໂດຍນໍາໃຊ້ແບບສອບຖາມ ແລະ ເປັນການວິເຄາະທາງສະຖິຕິແບບຖົດຖອຍພະຫຸພົດ (Multiple regression analysis) ດ້ວຍວິທີ Stepwise.

**ການເກັບລວມລວມຂໍ້ມູນ:** ຜູ້ສຶກສາໄດ້ມີການລົງເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມ, ການສັງເກດການ ແລະ ສໍາພາດກຸ່ມເປົ້າໝາຍ ເຊິ່ງແມ່ນຜູ້ປະກອບການທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ.

**ການວິເຄາະຂໍ້ມູນ:** ການວິເຄາະຄວາມສາມາດໃນການແຂ່ງຂັນທຸລະກິດເຮືອນພັກ ເປັນການວິເຄາະແບບປະລິມານ ດ້ວຍສະຖິຕິພັນລະນາ ປະກອບມີດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ; ສ່ວນສໍາລັບການວິເຄາະປັດໃຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດເຮືອນພັກໃນ ນະຄອນຫຼວງພະບາງເປັນການວິເຄາະແບບປະລິມານ ດ້ວຍແບບຈໍາລອງສົມຜົນການຖົດຖອຍແບບພະຫຸພົດ ດ້ວຍວິທີ Stepwise ເຊິ່ງມີການກວດສອບສໍາປະສິດສະຫະສໍາພັນແບບເພຍຊັນ (Pearson correlation), ສໍາປະສິດໃນການຕັດສິນໃຈ ($R^2$ )ແລະ T-test. ດ້ວຍລະດັບຄວາມເຊື່ອໝັ້ນ 90%, 95% ແລະ 99% ໂດຍການວິເຄາະຜ່ານໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 21) ໂດຍກໍານົດຄ່າລະດັບຄວາມສໍາຄັນທາງດ້ານສະຖິຕິຄື *sig ≤ 0.1 **sig ≤ 0.05 ***sig ≤0.01

ແບບຈໍາລອງທີ່ໃຊ້ການສຶກສາປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ ໄດ້ນໍາໃຊ້ສົມຜົນການຖົດຖອຍແບບພະຫຸພົດ (Multiple Linear Regression) ແລະ ອີງໃສ່ແບບຈໍາລອງການໄດ້ຄົ້ນຄວ້າຂອງ Siwakorn Anoree (2021), Thunyaphat Laojampa & Thatsaporn Srisook (2022) ໄດ້ດັ່ງນີ້:

$$Y(X) = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \beta_7 X_7 + \beta_8 X_8 + \beta_9 X_9 + \beta_{10} X_{10} + \beta_{11} X_{11} + \beta_{12} X_{12} + \varepsilon$$

## 3. ຜົນໄດ້ຮັບ

ໃນການວິເຄາະຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມ ພົບວ່າ: ໃນດ້ານການສ້າງຄວາມແຕກຕ່າງໃນບໍລິການ ແມ່ນມີຄວາມສາມາດແຂ່ງຂັນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.00 ໃນນັ້ນດ້ານການສ້າງຄວາມແຕກຕ່າງດ້ານຜະລິດຕະພັນ ຫຼື ການບໍລິການ ໃຫ້ຄວາມສໍາຄັນຢູ່ໃນລະດັບຫຼາຍ ດ້ວຍມີຄ່າສະເລ່ຍເທົ່າກັບ 4.10; ຮອງລົງມາ ການສ້າງຄວາມແຕກຕ່າງດ້ານການບໍລິການ ໃຫ້ຄວາມສໍາຄັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍເທົ່າກັບ 4.03; ການສ້າງຄວາມແຕກຕ່າງດ້ານພາບຫຼັກ ໃຫ້ຄວາມສໍາຄັນຢູ່ໃນລະດັບຫຼາຍ ດ້ວຍມີຄ່າສະເລ່ຍເທົ່າກັບ 3.99; ການສ້າງຄວາມແຕກຕ່າງດ້ານບຸກຄະລາກອນໃຫ້ບໍລິການ ໃຫ້ຄວາມສໍາຄັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍເທົ່າກັບ 3.97 ແລະ ອັນດັບສຸດທ້າຍ ການສ້າງຄວາມແຕກຕ່າງດ້ານທີ່ຊ່ອງທາງການຈັດຈໍາໜ່າຍ ໃຫ້ຄວາມສໍາຄັນ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 3.91; ດ້ານຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມ ໃນດ້ານການເປັນຜູ້ນໍາທາງຕົ້ນທຶນ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.01 ໃນ

ນັ້ນດ້ານຄວາມຍຸດຕິທຳໃນການຈ່າຍຄ່າຕອບແທນໃຫ້ແກ່ພະນັກງານເພື່ອເພີ່ມມູນຄ່າໃຫ້ກັບການບໍລິການ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.03 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.73; ຮອງລົງມາ ຄວາມສາມາດຄວບຄຸມອຳນາດຕໍ່ລອງຜູ້ສະໜອງ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.01; ຄວາມສາມາດຫຼຸດຕົ້ນທຶນກິດຈະການເພື່ອປະສິດທິພາບໃນການດຳເນີນງານ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.00; ຄວາມສາມາດຄວບຄຸມປັດໄຈການຜະລິດ ຫຼື ການດຳເນີນງານ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.00; ດ້ານຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມໃນດ້ານຕອບສະໜອງຢ່າງວ່ອງໄວ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.06 ໃນນັ້ນດ້ານຄວາມສາມາດພັດທະນາການບໍລິການໃໝ່ໆ ແລະ ການຕອບສະໜອງກັບຄວາມຕ້ອງການລູກຄ້າ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.07; ຮອງລົງມາ ຄວາມສາມາດຕອບຄຳຖາມຂອງລູກຄ້າ ໃນຂໍ້ສົງໄສ ຫຼື ຂໍ້ມູນຕ່າງກັບການບໍລິການ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.06 ແລະ ອັນດັບສຸດທ້າຍ ຄວາມສາມາດປັບປຸງຄຸນນະພາບການບໍລິການເດີມທີ່ມີຢູ່ໃຫ້ເກີດການພັດທະນາ ແລະ ກົງກັບຄວາມຕ້ອງການຂອງລູກຄ້າ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.06 ແລະ ດ້ານຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມ ໂດຍລວມ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.02 ໃນນັ້ນດ້ານຄວາມສາມາດໃນຕອບສະໜອງຢ່າງວ່ອງໄວ ໃນການໃຫ້ບໍລິການເໜືອກວ່າຄູ່ແຂ່ງຂັນທຸລະກິດ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.06; ຮອງລົງມາ ຄວາມສາມາດການເປັນຜູ້ນຳທາງຕົ້ນທຶນໃນການໃຫ້ບໍລິການເໜືອຕໍ່າກວ່າຄູ່ແຂ່ງຂັນ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.01 ແລະ ອັນດັບສຸດທ້າຍ ຄວາມສາມາດການສ້າງຄວາມແຕກຕ່າງໃນບໍລິການທີ່ແຕກຕ່າງຈາກຄູ່ແຂ່ງຂັນ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 4.00.

ຜົນການວິເຄາະປັດໄຈທີ່ມີຄວາມສຳພັນກັບສັກກະຍະພາບໃນດ້ານການຜະລິດ ແລະ ການພັດທະນາຜະລິດຕະພັນ ເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນນະຄອນຫຼວງພະບາງພົບວ່າ: ຄ່າສະຖິຕິທົດສອບບັນຫາຄວາມສຳພັນກັນເອງຂອງຕົວປ່ຽນ (Multicollinearity) ດ້ວຍວິທີ Pearson Correlations ພົບວ່າຄ່າສຳປະສິດສະຫະສຳພັນຂອງຕົວປ່ຽນອິດສະຫຼະແຕ່ລະຄູ່ ເຫັນວ່າມີຄ່ານ້ອຍກວ່າ 0.80, ສະແດງວ່າຕົວປ່ຽນອິດສະ ຫຼະຂອງສົມຜົນໃນແບບຈຳລອງຂອງການຄົ້ນຄວ້າບໍ່ ມີບັນຫາພະຫຸສຳພັນຂອງຕົວປ່ຽນອິດສະຫຼະ (Multi-collinearity) ແລະ ຜ່ານການທົດສອບຄ່າສະຖິຕິທົດສອບ ANOVA ຫຼື ການທົດສອບຄວາມແປປວນຂອງຕົວປ່ຽນ (F = 83.126) ແລະ ມີລະດັບຄວາມສຳຄັນທາງສະຖິຕິ (Sig = 0.00) ສະແດງວ່າ: ປັດໄຈຕ່າງໆທີ່ນຳເຂົ້າມາສຶກສາມີຄວາມສຳພັນທາງເສັ້ນຊື່ກັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ານດ້ານການສ້າງຄວາມແຕກຕ່າງໃນບໍລິການ ແລະ ຂຶ້ນຢູ່ກັບປັດໄຈທີ່ກຳນົດມາຢ່າງໜ້ອຍ 1 ປັດໄຈ.

ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງພົບວ່າ ຄ່າສຳປະສິດການຕັດສິນໃຈ Adjusted R Square = 0.555ເຊິ່ງໝາຍຄວາມວ່າ ປັດໄຈຕ່າງໆທີ່ນຳເຂົ້າມາສຶກສາ ສາມາດອະທິບາຍຄວາມສຳພັນທາງເສັ້ນຊື່ກັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ານດ້ານການສ້າງຄວາມແຕກຕ່າງໃນບໍລິການໃນລະດັບ 55.5%, ສ່ວນທີ່ເຫຼືອແມ່ນຂຶ້ນຢູ່ກັບປັດໄຈອື່ນໆທີ່ບໍ່ໄດ້ນຳເຂົ້າມາສຶກສາ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງຄວາມສຳພັນໃນລະດັບຄວາມສຳຄັນທາງສະຖິຕິ 0.01 ພົບວ່າ ມີ 4 ປັດໄຈ ປະກອບມີ ຄື: ປັດໄຈດ້ານເຕັກໂນໂລຊີ ($X_{16}$), ປັດໄຈດ້ານເສດຖະກິດ ($X_{14}$), ປັດໄຈດ້ານກາຍຍະພາບ ($X_{11}$) ແລະ ປັດໄຈດ້ານວັດທະນາທຳ ແລະ ສັງຄົມ ($X_{15}$) ມີຄວາມສຳທາງເສັ້ນຊື່ກັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ມີຄວາມສຳພັນທາງເສັ້ນຊື່ກັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນ

ນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ານດ້ານການສ້າງຄວາມແຕກຕ່າງໃນບໍລິການ($Y_1$). ເຊິ່ງສາມາດນໍາມາສ້າງແບບຈໍາລອງທາງດ້ານເສດຖາມິຕິໄດ້ດັ່ງນີ້:

$$\hat{Y} = \underset{(0.916)^{ns}}{0.196} + \underset{(5.899)^{***}}{0.353X_{16}} + \underset{(3.630)^{***}}{0.213X_{14}} + \underset{(3.182)^{***}}{0.192X_{11}} + \underset{(2.943)^{***}}{0.179X_{15}}$$

ຈາກສົມຜົນການຖົດຖອຍພະຫຸຜົດ ສາມາດພະຍາກອນປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ໄດ້ດັ່ງນີ້:

1. ຄ່າສໍາປະສິດ ຂອງປັດໄຈດ້ານເຕັກໂນໂລຊີ ($X_{16}$) ມີຄ່າເທົ່າກັບ 0.353 ເຊິ່ງໝາຍຄວາມວ່າຖ້າສະພາບແວດລ້ອມພາຍນອກທາງທຸລະກິດ ໃນປັດໄຈດ້ານເຕັກໂນໂລຊີມີການພັດທະນາຄວາມວ່ອງໄວ້ ແລະ ການຖ່າຍທອດເຕັກໂນໂລຊີ, ມີຄວາມທັນສະໄໝ ແລະ ຄວາມວ່ອງໄວຂອງລະບົບເຕັກໂນໂລຊີການສື່ສານ, ຄວາມວ່ອງໄວໃນການກະຈາຍຂໍ້ມູນຂ່າວສານໄປເຖິງກຸ່ມລູກຄ້າເປົ້າໝາຍ ແລະ ທົ່ວປະເທດ ໂດຍລະດັບຄວາມສໍາຄັນປັດໄຈດັ່ງກ່າວ ເພີ່ມຂຶ້ນ 1 ລະດັບ ຈະມີຄວາມສໍາພັນກັບທາງບວກຕໍ່ລະດັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ເພີ່ມຂຶ້ນ 0.353 ລະດັບ ແລະ ກົງກັນກັບສົມມຸດຖານທີ່ຕັ້ງໄວ້.

2. ຄ່າສໍາປະສິດ ຂອງປັດໄຈດ້ານເສດຖະກິດ ($X_{14}$) ມີຄ່າເທົ່າກັບ 0.213 ເຊິ່ງໝາຍຄວາມວ່າຖ້າສະພາບແວດລ້ອມພາຍນອກທາງທຸລະກິດ ໃນປັດໄຈດ້ານເສດຖະກິດຂອງ ສປປ ລາວ ແລະ ແຂວງຫຼວງພະບາງ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຄວາມເໝາະສົມອັດຕາດອກເບ້ຍເງິນກູ້ກັບທຸລະກິດ, ລະດັບອັດຕາເງິນເຟີ້ໃນລະບົບເສດຖະກິດ ແລະ ຄວາມເໝາະສົມຕົ້ນທຶນຂອງສິນຄ້າ ແລະ ການບໍລິການ ໂດຍລະດັບຄວາມສໍາຄັນປັດໄຈດັ່ງກ່າວ ເພີ່ມຂຶ້ນ 1 ລະດັບ ຈະມີຄວາມສໍາພັນກັບທາງບວກຕໍ່ລະດັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ເພີ່ມຂຶ້ນ 0.213 ລະດັບ ແລະ ກົງກັນກັບສົມມຸດຖານທີ່ຕັ້ງໄວ້.

3. ຄ່າສໍາປະສິດ ຂອງປັດໄຈດ້ານກາຍຍະພາບ ($X_{11}$) ມີຄ່າເທົ່າກັບ 0.192 ເຊິ່ງໝາຍຄວາມວ່າຖ້າຜູ້ປະກອບການທຸລະກິດທີ່ພັກແຮມໃຫ້ຄວາມສໍາຄັນໃນການສ້າງທຸລະກິດໃຫ້ມີພາບລັກທີ່ດີ ຄື: ການຕົບແຕ່ງພາຍໃນອາຄານມີບັນຍາກາດດີ, ທັນສະໄໝ ແລະ ສ່ວຍງາມ; ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກມີເອກະລັກ ແລະ ທັນສະໄໝຕາມຍຸກປະຈຸບັນ; ມີໜັງສືພິມໃຫ້ອ່ານ ແລະ ນໍ້າໃຫ້ດື່ມໃນເວລາລໍບໍລິການ; ສະຖານທີ່ພາຍນອກ ແລະ ໃນພາຍໃນອາຄານມີຄວາມສະອາດດີ ແລະ ມີສະຖານທີ່ການຈອດລົດທີ່ພຽງພໍ ໂດຍໃຫ້ລະດັບຄວາມສໍາຄັນປັດໄຈດັ່ງກ່າວ ເພີ່ມຂຶ້ນ 1 ລະດັບ ຈະມີຄວາມສໍາພັນກັບທາງບວກຕໍ່ລະດັບຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ເພີ່ມຂຶ້ນ 0.192 ລະດັບ ແລະ ກົງກັນກັບສົມມຸດຖານທີ່ຕັ້ງໄວ້.

4. ຄ່າສໍາປະສິດ ຂອງປັດໄຈດ້ານວັດທະນາທໍາ ແລະ ສັງຄົມ ($X_{15}$) ມີຄ່າເທົ່າກັບ 0.179 ເຊິ່ງໝາຍຄວາມວ່າຖ້າສະພາບແວດລ້ອມພາຍນອກທາງທຸລະກິດ ໃນປັດໄຈດ້ານວັດທະນາທໍາ ແລະ ສັງຄົມ ໃຫ້ຄວາມສໍາຄັນຄ່ານິຍົມຂອງສັງຄົມ ແລະ ລູກຄ້າໃນການອຸປະໂພກ-ບໍລິໂພກ, ການດູແລ-ຄວບຄຸມທຸລະກິດທີ່ພັກແຮມຢ່າງຕໍ່ເນື່ອງ, ຄວາມຮັບຜິດຊອບຂອງທຸລະກິດຕໍ່ສັງຄົມ, ອັດຕາການເພີ້ມຂຶ້ນຂອງປະຊາກອນ ແລະ ຄວາມຕ້ອງການມາໃຊ້ບໍລິການຂອງລູກຄ້າ ລວມຄວມເໝາະສົມຂອງຄ່າຈ້າງພະນັກງານໃນທຸລະກິດທີ່ພັກແຮມ ໂດຍລະດັບຄວາມສໍາຄັນປັດໄຈດັ່ງກ່າວ ເພີ່ມຂຶ້ນ 1 ລະດັບ ຈະມີຄວາມສໍາພັນກັບທາງບວກຕໍ່ລະດັບຄວາມສາມາດໃນການແຂ່ງ ຂັນຂອງທຸລະກິດພັກແຮມ ໃນນະຄອນ ຫຼວງພະບາງ ເພີ່ມຂຶ້ນ 0.179 ລະດັບ ແລະ ກົງກັນກັບສົມມຸດຖານທີ່ຕັ້ງໄວ້

## 4. ວິພາກຜົນ

ຈາກການສຶກສາພົບວ່າຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີ່ປະກອບການທຸລະກິດເຮືອນພັກ ໂດຍລວມ ຢູ່ໃນລະດັບຫຼາຍ ເຊິ່ງມາຈາກຄວາມສາມາດໃນຕອບສະໜອງຢ່າງວ່ອງໄວ ໃນການໃຫ້ບໍລິການເໜືອກວ່າຄູ່ແຂ່ງຂັນທຸລະກິດ, ຄວາມສາມາດການເປັນຜູ້ນໍາ

ທາງຕົ້ນທຶນໃນການໃຫ້ບໍລິການເໜືອຕ່ຳກວ່າຄູ່ແຂ່ງຂັນ ແລະ ຄວາມສາມາດການສ້າງຄວາມແຕກຕ່າງໃນບໍລິການທີ່ແຕກຕ່າງຈາກຄູ່ແຂ່ງຂັນ. ເຊິ່ງການຄົ້ນຄວ້າສອດຄ່ອງກັບແນວຄິດຄວາມສາມາດໃນການແຂ່ງຂັນຂອງ Michael E. Porter (2005) ໃນດ້ານການສ້າງຄວາມແຕກຕ່າງຈາກຄູ່ແຂ່ງຂັນ, ການເປັນຜູ້ນຳດ້ານຕົ້ນທຶນ ແລະ ດ້ານການຕອບສະໜອງຢ່າງວ່ອງໄວກວ່າຄູ່ແຂ່ງຂັນ. ສອດຄ່ອງກັບການຄົ້ນຄວ້າ ຂອງ Lasmy SINGVILAY (2021) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃນທຸກໆດ້ານ, ຍັງສອດຄ່ອງກັບການຄົ້ນຄວ້າຂອງ Thunyaphat Laojampa ແລະ Thatsaporn Srisook (2022) ໄດ້ສຶກສາປັດໄຈສ່ວນປະສົມທາງການຕະຫຼາດເພື່ອເພີ່ມຄວາມສາມາດໃນການແຂ່ງຂັນຂອງຮ້ານສະຫະກອນໂຮງໜໍລຳປາງ ຈຳກັດໃນທຸກດ້ານ. ການຄົ້ນຄວ້າຍັງສອດຄ່ອງກັບ. ສະນັ້ນ, ຜູ້ປະກອບການທຸລະກິດທີ່ພັກແຮມ ໃນປະເພດທຸລະກິດເຮືອນພັກ ຢູ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕ້ອງໃຊ້ຍຸດທະສາດໃນການດຳເນີນທຸລະກິດເພື່ອໃຫ້ການບໍລິການທີ່ມີຕົ້ນທຶນຕຳທີ່ສຸດເພື່ອສາມາດນຳສະເໜີລາຄາການບໍລິການຕ່ຳກວ່າຄູ່ແຂ່ງຂັນໃນທ້ອງຕະ ຫຼາດ, ຕ້ອງສ້າງຄວາມແຕ່ກຕ່າງໆດ້ານການໃຫ້ບໍລິການຈາກຜູ້ປະກອບການທຸລະກິດທີ່ພັກແຮມລາຍອື່ນໆໃນທອງຕະຫຼາດ ຫຼື ຕ້ອງມີນະວັດຕະກຳໃໝ່ໆ ມານຳສະເໜີໃຫ້ການບໍລິການທີ່ໂດດເດັ່ນກ່ວາຄູ່ແຂ່ງຂັນໃນຕະຫຼາດທຸລະກິດທີ່ພັກແຮມໂດຍເນັ້ນຕະຫຼາດສະເພາະ ແລະ ກຸ່ມລູກຄ້າເປົ້າໝາຍ.

ຈາກການສຶກສາພົບວ່າ ປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມ ໃນປະເພດທຸລະກິດເຮືອນພັກ ຢູ່ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບ ມີ 5 ປັດໄຈຄື: ປັດໄຈດ້ານກາຍຍະພາບ, ປັດໄຈດ້ານເຕັກໂນໂລຊີ, ປັດໄຈດ້ານເສດຖະກິດ, ປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ ແລະ ປັດໄຈດ້ານວັດທະນະທຳ ແລະ ສັງຄົມ ການຄົ້ນຄວ້າສອດຄ່ອງກັບ Siwakorn Anoree (2021) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສຳເລັດຂອງຜູ້ປະກອບການ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນ ແຂວງຣາຊະບຸຣີ (ໄທ) ໃນປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈດ້ານເຕັກໂນໂລຊີ, ປັດໄຈດ້ານເສດຖະກິດ ແລະ ປັດໄຈດ້ານວັດທະນາທຳແລະສັງຄົມ. ການຄົ້ນຄວ້າຍັງສອດຄ່ອງກັບ Lasmy SINGVILAY (2021) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃນປັດໄຈດ້ານເສດຖະກິດ ເທົ່ານັ້ນ. ສະນັ້ນ, ຜູ້ປະກອບການທຸລະກິດທີ່ພັກແຮມ ໃນປະເພດທຸລະກິດເຮືອນພັກ ຕ້ອງວິເຄາະສະພາບແວດລ້ອມພາຍໃນ ແລະ ພາຍນອກທຸລະກິດ ໂດຍສະເພາະປັດໄຈດ້ານກາຍຍະພາບ, ປັດໄຈດ້ານເຕັກໂນໂລຊີ , ປັດໄຈດ້ານເສດຖະກິດ, ປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ ແລະ ປັດໄຈດ້ານວັດທະນາທຳແລະສັງຄົມ, ນອກຈາກນັ້ນລັດຖະບານຄວນມີການວາງແຜນຍຸດທະສາດການແຂ່ງຂັນຂອງທຸລະກິດທີ່ພັກແຮມ ໃນແຕ່ລະປະເພດ ແລະ ແຕ່ລະແຂວງໃຫ້ຊັດເຈນເນື່ອງຈາກສະພາບແວດລ້ອມທາງທຸລະກິດ ແລະ ຈຸດແຂງແຕ່ລະແຂວງແຕກຕ່າງກັນ, ລວມທັງດຳເນີນການເຮັດວຽກງານຮ່ວມກັບຜູ້ປະກອບການຢ່າງໃກ້ສິດ ເພື່ອຊ່ວຍວາງຍຸດທະສາດທາງທຸລະກິດໃຫ້ເໝາະສົມ ແລະ ສາມາດແຂ່ງຂັນທາງການຕະຫຼາດໄດ້

**5. ສະຫຼຸບ**

ຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການທຸລະກິດທີ່ພັກແຮມ ປະເພດທຸລະກິດເຮືອນພັກ ໂດຍລວມຢູ່ໃນລະດັບ ເຊິ່ງການຈັດອັນດັບຄວາມສຳຄັນແຕ່ໃຫຍ່ໄປຫານ້ອຍ ມາຈາກ: 1) ຄວາມສາມາດໃນຕອບສະໜອງຢ່າງວ່ອງໄວ ໃນການໃຫ້ບໍລິການເໜືອກວ່າຄູ່ແຂ່ງຂັນທຸລະກິດຄື: ສ້າງຄວາມແຕກຕ່າງດ້ານຜະລິດຕະພັນ ຫຼື ການບໍລິການ, ການສ້າງຄວາມແຕກຕ່າງດ້ານການບໍລິການ, ການສ້າງຄວາມແຕກຕ່າງດ້ານພາບຫຼັກ, ການສ້າງຄວາມແຕກຕ່າງດ້ານບຸກຄະລາກອນໃຫ້ບໍລິການ ແລະການສ້າງຄວາມແຕກຕ່າງດ້ານທີ່ຊ່ອງທາງການຈັດຈຳໜ່າຍ; ຄວາມສາມາດການເປັນຜູ້ນຳທາງຕົ້ນທຶນໃນການໃຫ້ບໍລິການເໜືອຕ່ຳກວ່າຄູ່ແຂ່ງຂັນ ເຊິ່ງການຈັດອັນດັບຄວາມສຳຄັນແຕ່ໃຫຍ່ໄປຫານ້ອຍ ມາຈາກ: ຄວາມຍຸດຕິທຳໃນການຈ່າຍຄ່າຕອບ

ແທນໃຫ້ແກ່ພະນັກງານເພື່ອເພີ່ມມູນຄ່າໃຫ້ກັບການບໍລິການ, ຄວາມສາມາດຫຼຸດຕົ້ນທຶນກິດຈະການເພື່ອປະສິດທິພາບໃນການດຳເນີນງານ, ຄວາມສາມາດຄວບຄຸມອຳນາດຕໍ່ລອງຜູ້ສະໜອງ ແລະ ຄວາມສາມາດຄວບຄຸມປັດໄຈການຜະລິດ ຫຼື ການດຳເນີນງານ. 3) ຄວາມສາມາດການສ້າງຄວາມແຕກຕ່າງໃນບໍລິການທີ່ແຕກຕ່າງຈາກຄູ່ແຂ່ງຂັນ ເຊິ່ງການຈັດອັນດັບຄວາມສຳຄັນແຕ່ໃຫຍ່ໄປຫານ້ອຍ ມາຈາກ: ຄວາມສາມາດພັດທະນາການບໍລິການໃໝ່ໆ ແລະ ການຕອບສະໜອງກັບຄວາມຕ້ອງການລູກຄ້າ, ຄວາມສາມາດຕອບຄຳຖາມຂອງລູກຄ້າ ໃນຂໍ້ສົງໄສ ຫຼື ຂໍ້ມູນຕ່າງໆກັບການບໍລິການ ແລະ ຄວາມສາມາດປັບປ່ຽນຄຸນນະພາບການບໍລິການເດີມທີ່ມີຢູ່ໃຫ້ເກີດການພັດທະນາ ແລະ ກົງກັບຄວາມຕ້ອງການຂອງລູກຄ້າ. ປັດໄຈທີ່ຜົນຕໍ່ຄວາມສາມາດໃນການແຂ່ງຂັນທຸລະກິດທີ່ພັກແຮມ ໃນປະເພດທຸລະກິດເຮືອນພັກ ຢູ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບ ມີ 5 ປັດໄຈຄື: ປັດໄຈດ້ານກາຍຍະພາບ, ປັດໄຈດ້ານເຕັກໂນໂລຊີ, ປັດໄຈດ້ານເສດຖະ ກິດ, ປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ ແລະ ປັດໄຈດ້ານວັດທະນາທຳ ແລະ ສັງຄົມ ໃນລະດັບຄວາມສຳຄັນທາງສະຖິຕິ 0.01. ສ່ວນປັດໄຈດ້ານການມີອິດສະຫຼະໃນການບໍລິການງານ, ປັດໄຈດ້ານຄວາມມີນະວັດຕະກຳ, ປັດໄຈດ້ານຄວາມກ້າສ່ຽງ, ປັດໄຈດ້ານຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈດ້ານຜະລິດຕະພັນ, ປັດໄຈດ້ານລາຄາ, ປັດໄຈຊ່ອງທາງການຈັດຈຳໜ່າຍ, ປັດໄຈດ້ານການສົ່ງເສີມທາງການຕະຫຼາດ, ປັດໄຈດ້ານບຸກຄະລາກອນ, ປັດໄຈດ້ານຂະບວນການໃຫ້ບໍລິການ ແລະ ປັດໄຈດ້ານການເມືອງ ບໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໃນລະດັບຄວາມສຳຄັນທາງສະຖິຕິ 0.01.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ສຶກສາ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ

## 7. ເອກະສານອ້າງອີງ


ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງ ທ່ຽວ. (2007). ປື້ມຄູ່ມືມາດຕະຖານສະຖານທີ່ພັກແຮມ ໃນ ສປປ ລາວ ເລກທີ່ 060/ອທຊ, ລົງວັນທີ່ 26 ກຸມພາ 2007. [ອອນໄລ].2022 ,[ຄົ້ນຫາວັນທີ່1 0 ຕຸລາ2022 ] .ຄົ້ນຫາຈາກ: https://e-tmd.com/index.php/legal-standard/standard-book/.

ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງທ່ຽວ. (2021). ຂໍ້ຕົກລົງວ່າດ້ວຍສະຖານທີ່ພັກແຮມ ເລກທີ985/ຖວທ. ວັນທີ 14 ທັນວາ 2021. [ອອນໄລ] .2022[ຄົ້ນຫາວັນທີ່1 0 ຕຸລາ2022 ]. ຄົ້ນຫາຈາກ: https://e-tmd.com/index.php/legal-standard/tourism-legal/.

ທະນາຄານແຫ່ງ ສປປ ລາວ. (2021). ບົດລາຍງານເສດຖະກິດ ປີ .2021 [ອອນໄລ], From : https://www.bol.gov.la/annualreports.

ທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງຫຼວງພະບາງ. (2021). ບົດລາຍງານງານດ້ານເສດຖະກິດ ປະຈຳປີ 2021 ຂອງທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງຫຼວງພະບາງ. [ອອນໄລ] 2022, ຄົ້ນຫາຈາກ: https://www.bol.gov.la/luangprabang/fileupload/05-09-2022_1662367594.pdf.

ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງ ທ່ຽວ. (2022). ບົດສະຫຼຸບສະຖິຕິວຽກງານການທ່ອງທ່ຽວ 9 ເດືອນຕົ້ນປີ 2022 ແລະ ຄາດຄະເນ 3 ເດືອນທ້າຍປີ 2022.

ສຳນັກງານຂ່າວສານປະເທດລາວ. (2022). ບົດລາຍຈຳນວນນັກທ່ອງທ່ຽວທີ່ມາທ່ອງທ່ຽວຫຼວງພະບາງ ໃນ 10 ເດືອນຕົ້ນປີ 2022. [ອອນໄລ] 2022, [ຄົ້ນຫາວັນທີ່ 15 ພະຈິກ2022 ] .ຄົ້ນຫາຈາກ https://kpl.gov.la/EN/detail.aspx?id=70050

College of Logistics and supply Chian. (2021). Principle of Marketing. [Online] 2023 . Retrieved January 11, 202 3 . Available from: https://elcls.ssru.ac.th/wiriya_bo/

Dess, G.G., Lumpkin, G.T.& Taylor, M.L. (2005). Strategic management: Creating competitive advantage (2nd ed.). New York: McGraw-Hill.

Kiplinger magazine. (2023). The 10 Cheapest Countries to Visit in 2023. [Online] 2023. Retrieved January 11, 2023. Available from: https://www.kiplinger.com/personal-finance/spending/cheapest-countries-to-travel-to

Porter, M.E. (2005). The Competitive Advantage Greating and Sustaining Superior Performance. New York: The Free Press.4.

Philips Kotler. (2014). Marketing management. (14th ed.). New Jersey: Prentice-Hall.

Lasmy SINGVILAY. (2021). Factors affecting the compititive advantage of service business entrepreneurs in the Xay District municipality of Oudomxay Province. Thesis master of Business Administration. Faculy of Economics and Tourism. Souphanouvong University.

Siwakorn Anoree. (2021). Factors affecting competitive advantage and success of Entrepreneurs and small and medium enterprises in Ratchaburi province. Master thesis of business administration program, Silpakorn University.

Thunyaphat Laojampa & Thatsaporn Srisook. (2022). Marketing Mix to Enhance Competitive Advantage of Lampang Hospital Consumer Cooperative Limited., Mueang District, Lampang Province. The 3rd National Academic Conference of the Rajabhat University of Kamphaeng Phet (No. 2)

Weerasak Yungyuen. (2018). The development guidelines to enhance the competitivenes of the tourism industry Uttaradit. Master thesis of management, faculty of tourism management, National Institute of Development Administration (NIDA).

**ຕາຕະລາງ 1:** ສະແດງເຖິງຜົນການວິເຄາະສົມຜົນການຖົດຖອຍພະຫຸພົດຂອງປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

**Coefficients**[a] (ຄ່າສຳປະສິດຂອງສົມຜົນພະຍາກອນ)

| Model | | Unstandardized Coefficients | | Standardized Coefficients | t | Sig. |
|---|---|---|---|---|---|---|
| | | B | Std. Error | Beta | | |
| 4 | (Constant) | 0.196 | 0.214 | | 0.916 | 0.360 |
| | $X_{16}$ (ປັດໄຈດ້ານເຕັກໂນໂລຊີ) | 0.353 | 0.060 | 0.350 | 5.899 | 0.000 |
| | $X_{14}$ (ປັດໄຈດ້ານເສດຖະກິດ) | 0.213 | 0.059 | 0.197 | 3.630 | 0.000 |
| | $X_{11}$ (ປັດໄຈດ້ານກາຍຍະພາບ) | 0.192 | 0.060 | 0.182 | 3.182 | 0.002 |
| | $X_{15}$ (ປັດໄຈດ້ານວັດທະນາທຳ ແລະ ສັງຄົມ) | 0.179 | 0.061 | 0.168 | 2.943 | 0.004 |

a. Dependent Variable: Y(ຄວາມສາມາດໃນການແຂ່ງຂັນຂອງທຸລະກິດພັກແຮມ ໃນດ້ານການສ້າງຄວາມແຕກຕ່າງໃນບໍລິການ)